ວັກຊີນໂຄວິດ-19

# ໄດ້ຮັບຂໍ້ເທັດຈິງ.

## ຢູ່ຢ່າງປອດໄພພາຍຫຼັງທີ່ຮັບການສັກຢາວັກຊີນ. ປ້ອງກັນຊຸມຊົນຂອງທ່ານ.



**ທ່ານຍັງບໍ່ປອດໄພຈາກໂຄວິດ-19 ເທື່ອຈົນກວ່າຈະຮອດສອງອາທິດຫຼັງຈາກທີ່ທ່ານສັກຢາເຂັມສຸດທ້າຍ!**




- ຖ້າທ່ານສັກ **ວັກຊີນຊະນິດສອງເຂັມ**, ທ່ານຕ້ອງໄດ້ລໍຖ້າ **2 ອາທິດ** ພາຍຫຼັງທີ່ທ່ານໄດ້ຮັບເຂັມທີສອງ.
- ຖ້າທ່ານສັກຢາວັກຊີນທີ່ຕ້ອງສັກພຽງແຕ່ **ເຂັມດຽວ**, ທ່ານຕ້ອງໄດ້ລໍຖ້າ **2 ອາທິດ** ພາຍຫຼັງທີ່ໄດ້ສັກຢາ.

## ຢູ່ຢ່າງປອດໄພພາຍຫຼັງທີ່ຮັບການສັກຢາວັກຊີນ

ຊ່ຽວຊານຍັງບໍ່ທັນຮູ້ວ່າວັນຊີນຈະປ້ອງກັນທ່ານຈາກໂຄວິດ-19 ໄດ້ດົນປານໃດ ຫຼືວ່າທ່ານຍັງສາມາດແຜ່ເຊື້ອໂຄວິດ-19 ໃຫ້ກັບຄົນອື່ນໆ ພາຍຫຼັງທີ່ໄດ້ຮັບການສັກຢາວັກຊີນແລ້ວຫຼືບໍ່. ເຖິງວ່າໄດ້ຮັບວັກຊີນແລ້ວກໍ່ຕາມ, ໃຫ້ສືບຕໍ່:



ໃສ່ຜ້າປິດປາກ.



ປະຕິບັດມາດຕະການຮັກສາໄລຍະຫ່າງທາງສັງຄົມ.



ຫຼີກລ່ຽງການເຂົ້າຮ່ວມງານລ້ຽງທີ່ມີຄົນຈຳນວນຫຼາຍ.



ໝັ່ນລ້າງ ມື ຂອງທ່ານເລື້ອຍໆ



ໝັ່ນຂ້າເຊື້ອບ່ອນທີ່ມີການສໍາພັດເປັນປະຈໍາ

**ເຖິງວ່າທ່ານຈະໄດ້ຮັບການສັກຢາວັກຊີນແລ້ວກໍ່ຕາມ, ເຂົ້າກວດຫາເຊື້ອໂຄວິດ-19 ທັນທີຖ້າວ່າ:**



ທ່ານໄດ້ຢູ່ໃກ້ **ຄົນທີ່ເປັນໂຄວິດ-19 ແລະ ເລີ່ມມີອາການໄຂ້.** ຍັງຕ້ອງພັກຢູ່ເຮືອນ ແລະ ຢູ່ຫ່າງຈາກຄົນອື່ນໆ.

ທ່ານ **ອາໄສຢູ່ກັບຫຼາຍຄົນ** ແລະໄດ້ **ຢູ່ໃກ້ກັບຄົນທີ່ເປັນໂຄວິດ-19. ເຖິງງວ່າທ່ານຈະບໍ່ຮູ້ສຶກວ່າເປັນໄຂ້ກໍ່ຕາມ, ຄວນໄປກວດຫາເຊື້ອໂຄວິດ** ພັກຢູ່ເຮືອນ ແລະ ຢູ່ຫ່າງຈາກຄົນອື່ນໆ.

NRC-RIM
National Resource Center for Refugees, Immigrants, and Migrants

**ສໍາລັບຂໍ້ມູນເພີ່ມເຕີມ: cdc.gov/coronavirus**